ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------

ກະຊວງການເງິນ ເລກທີ 1211/ກງ.ກສອ

ກົມສ່ວຍສາອາກອນ ນະຄອນຫລວງວຽງຈັນ, ວັນທີ 03 ມັງກອນ 2012

# <u>ແຈ້ງການ</u>

ເຖິງ : ທ່ານຜູ້ອໍານວຍການ ວິສາຫະກິດເອກະຊົນ, ວິສາຫະກິດຂອງລັດ, ວິສາຫະກິດປະສົມ, ວິສາຫະກິດລວມໝູ່ ທີ່ດໍາເນີນທຸລະກິດໃນທຸກຮູບການ ແລະທຸກຮູບແບບ ລວມທັງວິສາຫະກິດຂອງຕ່າງປະເທດທີ່ມາເຄື່ອນໄຫວຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ.

<u>ເລື່ອງ</u> :ການແຈ້ງອາກອນມູນຄ່າເພີ່ມ

- ອີງຕາມ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 06/ສພຊ, ລົງວັນທີ 26/12/2006;
- ອີງຕາມ ລະບຽບການແຈ້ງ ແລະການມອບອາກອນມູນຄ່າເພີ່ມ ສະບັບເລກທີ 3227/ກງ, ລົງວັນທີ 17/12/2009.

ເພື່ອເຮັດໃຫ້ວຽກງານອາກອນມູນຄ່າເພີ່ມໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບກັນໃນຂອບເຂດທົ່ວປະເທດ ກົມສ່ວຍສາອາກອນ ຂໍແຈ້ງມາຍັງບັນດາວິສາຫະກິດຊາບ ກ່ຽວກັບການແຈ້ງ ແລະມອບອາກອນມູນຄ່າເພີ່ມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 32 ແລະ 33 ຂອງກົດໝາວ່າດ້ວຍອາກອນມູນຄ່າເພີ່ມ ຕ້ອງຍື່ນໃບແຈ້ງມອບອາກອນມູນຄ່າເພີ່ມເປັນແຕ່ລະເດືອນຢ່າງຕໍ່ເນື່ອງ ຕໍ່ລັດຖະການສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ, ຖ້າບຸກຄົນ ຫລື ນິຕິບຸກໃດທີ່ດໍາເນີນທຸລະກິດເຂົ້າໃນລະບົບອາກອນມູນຄ່າເພີ່ມ ບໍ່ຍື່ນໃບແຈ້ງອາກອນມູນຄ່າເພີ່ມ ນອກຈາກຈະຖືກປັບໃໝຕາມທີ່ໄດ້ກໍານົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມແລ້ວ ຍັງຈະບໍ່ພິຈາລະນາໃຫ້ຫັກ ຫລື ສົ່ງຄືນ ແລະລວມທັງບໍ່ອະນຸຍາດໃຫ້ລົງເປັນລາຍຈ່າຍໃນທຸລະກິດໄດ້ ( ບັນດາລາຍຈ່າຍໃນທຸລະກິດ ), ສະນັ້ນ ເພື່ອບໍ່ໃຫ້ຖືກປະຕິບັດມາດຕະການ ແລະເສຍສິດດັ່ງກ່າວ ບຸກຄົນ ຫລື ນິຕິບຸກຄົນທີ່ດໍາເນີນທຸລະກິດເຂົ້າໃນລະບົບອາກອນມູນຄ່າເພີ່ມ ຕ້ອງປະຕິບັດຕາມລະ

ບຽບກົດໝາຍອາກອນມູນຄ່າເພີ່ມຢ່າງເຂັ້ມງວດ ແລະຕ້ອງຍື່ນໃບແຈ້ງອາກອນມູນຄ່າເພີ່ມເປັນແຕ່ລະເດືອນຢ່າງຕໍ່ເນື່ອງ, ສໍາລັບ ບຸກຄົນ ຫລື ນິຕິບຸກຄົນທີ່ດໍາເນີນທຸລະກິດເຂົ້າໃນລະບົບອາກອນມູນຄ່າເພີ່ມ ທີ່ບໍ່ຍື່ນໃບແຈ້ງອາກອນມູນຄ່າເພີ່ມນັບແຕ່ມື້ເລີ່ມປະຕິບັດອາກອນມູນຄ່າເພີ່ມເປັນຕົ້ນມາ ແມ່ນໃຫ້ແຈ້ງຄືນເປັນແຕ່ລະເດືອນ ບໍ່ໃຫ້ກາຍວັນທີ 29 ກຸມພາ 2012, ການຍື່ນໃບແຈ້ງອາກອນມູນຄ່າເພີ່ມໃນແຕ່ລະເດືອນ ຕ້ອງຕິດຄັດບັນດາເອກະສານດັ່ງນີ້ມາພ້ອມເປັນແຕ່ລະເດືອນ:

1. ຕາຕະລາງສັງລວມການຂາຍສິນຄ້າ ຫລື ບໍລິການ ( ກໍລະນີຂາຍພາຍໃນປະເທດ );
2. ຕາຕະລາງສັງລວມການຂາຍສິນຄ້າ ( ກໍລະນີມີການສົ່ງອອກໄປຕ່າງປະເທດ );
3. ຕາຕະລາງສັງລວມການຂາຍທີ່ຖືກຍົກເວັ້ນ;
4. ຕາຕະລາງສັງລວມການຊື້ສິນຄ້າ ແລະຫລື ບໍລິການ ( ກໍລະນີພາຍໃນປະເທດ );
5. ຕາຕະລາງສັງລວມຊື້ສິນຄ້າ ( ກໍລະນີມີການນໍາເຂົ້າສິນຄ້າຈາກຕ່າງປະເທດ );
6. ຕາຕະລາງສັງລວມການຊື້ທີ່ຖືກຍົກເວັ້ນ;
7. ຕາຕະລາງສະຫລຸບສາງສິນຄ້າ.

ດັ່ງນັ້ນ, ຈິ່ງແຈ້ງການມາຍັງບັນດາທ່ານ ເພື່ອຊາບ ແລະປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມສ່ວຍສາອາກອນ

ປ.ມະນີວອນ ອິນສີຊຽງໃໝ່